ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ສະພາແຫ່ງຊາດ　　　　　　　　　　　　　　　　　　　　ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2016

# ກົດໝາຍ
# ວ່າດ້ວຍ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ການນໍາໃຊ້, ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການພັດທະນາຢ່າງເປັນລະບົບ, ມີຄຸນນະພາບ, ທັນສະໄໝ, ວ່ອງໄວ, ປອດໄພ ແລະ ສົ່ງເສີມວຽກງານນີ້ເຂົ້າໃນທຸກຂະແໜງການໃຫ້ມີປະສິດທິພາບ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະເທດຊາດມີຄວາມໝັ້ນຄົງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທໍາ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນ ເຕັກໂນໂລຊີທີ່ຮັບໃຊ້ໃນການສ້າງຂໍ້ມູນ ຂ່າວສານເປັນລະບົບເອເລັກໂຕຣນິກ, ການຄໍານວນ, ການຈັດລຽງລໍາດັບ, ການເກັບຮັກສາ ແລະ ການແລກປ່ຽນຂໍ້ມູນ ຂ່າວສານຜ່ານເຄືອຂ່າຍການສື່ສານ ເປັນຕົ້ນ ຄອມພິວເຕີ, ໂທລະສັບ, ອຸປະກອນສື່ສານ, ອຸປະກອນກະຈາຍສຽງ, ໂທລະພາບ, ເຄືອຂ່າຍ ແລະ ອຸປະກອນເອເລັກໂຕຣນິກອື່ນ ລວມທັງການບໍລິການຕ່າງໆທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ** ໝາຍເຖິງ ຊອບແວ, ຮາດແວ ແລະ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງກັບການສື່ສານ ຂໍ້ມູນ ຂ່າວສານ;

2. **ຊອບແວ (Software)** ໝາຍເຖິງ ຊຸດຄຳສັ່ງ ຫຼື ໂປຣແກຣມ ທີ່ບັນຊາຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກອື່ນ ໃຫ້ປະຕິບັດງານສະເພາະໃດໜຶ່ງ;

3. **ຊອບແວເປີດ (Open Source Software)** ໝາຍເຖິງ ຊອບແວທີ່ເປີດເຜີຍຫຼັກການ ຫຼື ລະຫັດຄຳສັ່ງພາຍໃນຂອງຊອບແວນັ້ນໃຫ້ບຸກຄົນອື່ນ ໃຊ້, ດັດແປງ, ແກ້ໄຂ ຫຼື ຕໍ່ຍອດ ເພື່ອພັດທະນາໃຫ້ດີຂຶ້ນ;

4. **ຊອບແວປິດ (Proprietary Software)** ໝາຍເຖິງ ຊອບແວທີ່ບໍ່ເປີດເຜີຍຫຼັກການ ຫຼື ລະຫັດຄຳສັ່ງພາຍໃນ ຂອງຊອບແວນັ້ນ;

5. **ຮາດແວ (Hardware)** ໝາຍເຖິງ ພາກສ່ວນ ຫຼື ອົງປະກອບຂອງຄອມພິວເຕີ ແລະ ອຸປະກອນເອເລັກໂຕຣນິກອື່ນ ເປັນຕົ້ນ ໜ່ວຍຄວາມຈຳ, ໜ້າຈໍ, ແປ້ນພິມ, ເຄື່ອງພິມ, ໂທລະສັບ, ໂທລະພາບ;

6. **ເຊີເວີ (Server)** ໝາຍເຖິງ ລະບົບຄອມພິວເຕີ ທີ່ມີຄວາມສາມາດສູງໃນການຈັດການວຽກງານ (high performance) ໂດຍມີການເຊື່ອມຕໍ່ເຄືອຂ່າຍ ແລະ ຕິດຕັ້ງຊອບແວ, ໂປຣແກຣມຕ່າງໆ ເພື່ອໃຫ້ບໍລິການແກ່ຄອມພິວເຕີໜ່ວຍອື່ນ;

7. **ເຄືອຂ່າຍຄອມພິວເຕີ** ໝາຍເຖິງ ລະບົບເຊື່ອມຕໍ່ຄອມພິວເຕີ ແລະ/ຫຼື ອຸປະກອນ ເອເລັກໂຕຣນິກອື່ນ ຜ່ານລະບົບສາຍສົ່ງແບບມີສາຍ ແລະ ບໍ່ມີສາຍ;

8. **ຂໍ້ມູນເອເລັກໂຕຣນິກ** ໝາຍເຖິງ ຂໍ້ມູນ ທີ່ບັນທຶກ ຫຼື ເກັບຮັກສາໄວ້ໃນຮູບແບບດີຈີຕອນ ຊຶ່ງສາມາດອ່ານໄດ້ ດ້ວຍລະບົບສະແດງຂໍ້ມູນ, ການພິມອອກ ຫຼື ດ້ວຍຮູບແບບອື່ນ;

9. **ຖານຂໍ້ມູນ (Data Base)** ໝາຍເຖິງ ບ່ອນເກັບຮັກສາຂໍ້ມູນໃນຮູບແບບເອເລັກໂຕຣນິກໄວ້ຢ່າງເປັນລະບົບ ທີ່ສາມາດ ຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ໄດ້;

10. **ສູນຂໍ້ມູນ ຂ່າວສານ (Data and ContentCenter)** ໝາຍເຖິງ ລະບົບລວມສູນໂຄງລ່າງພື້ນຖານເຕັກນິກ ເພື່ອໃຫ້ບໍລິການທາງດ້ານຂໍ້ມູນ ຂ່າວສານ ເປັນຕົ້ນ ບໍລິການວາງເຊີເວີ, ຖານຂໍ້ມູນ, ໂປຣແກຣມ, ເວັບໄຊ ແລະ ສະໜອງຂໍ້ມູນ ຂ່າວສານຕ່າງໆ ຜ່ານອິນເຕີເນັດ;

11. **ເວັບໄຊ (Website)** ໝາຍເຖິງ ລະບົບຂໍ້ມູນ ຂ່າວສານ ທີ່ສ້າງຂຶ້ນເປັນໜຶ່ງ ຫຼື ຫຼາຍໜ້າເວັບ;

12. **ໜ້າເວັບ (Web Page)** ໝາຍເຖິງ ກະດານຂ່າວເອເລັກໂຕຣນິກ ໃນຮູບແບບ ສັນຍາລັກ, ຕົວເລກ, ຕົວໜັງສື, ຮູບພາບ, ວີດີໂອ, ສຽງ ແລະ ຮູບແບບອື່ນ ຜ່ານອິນເຕີເນັດ;

13. **ລະບົບອິນເຕີເນັດເຊື່ອມຕໍ່ທຸກອຸປະກອນ (Internet of Things – IoT)** ໝາຍເຖິງ ລະບົບທີ່ປະກອບດ້ວຍສິ່ງຂອງ, ວັດຖຸປະກອນ, ເຄື່ອງໃຊ້ ຫຼື ຫຼາຍສິ່ງລວມກັນທີ່ສາມາດກຳນົດຕົນຕົວ, ຮັບຮູ້ສະພາບແວດລ້ອມໄດ້, ມີປະຕິສຳພັນໂຕ້ຕອບ ແລະ ເຮັດວຽກຮ່ວມກັນໄດ້ ໂດຍການເຊື່ອມຕໍ່ ຜ່ານລະບົບການສື່ສານ;

14. **ຄລາວຄອມພິວຕິ້ງ (Cloud Computing)** ໝາຍເຖິງ ລະບົບທີ່ມີລັກສະນະນຳໃຊ້ຊັບພະຍາກອນຮ່ວມກັນ ໂດຍຜ່ານອິນເຕີເນັດ ເປັນຕົ້ນ ການເກັບຮັກສາຂໍ້ມູນ, ການເຂົ້າຫາຂໍ້ມູນ ແລະ ການນຳໃຊ້ໂປຣແກຣມ;

**15. ຜູ້ໃຫ້ບໍລິການ** ໝາຍເຖິງ ຜູ້ສະໜອງບໍລິການ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເປັນຕົ້ນ ຜູ້ໃຫ້ບໍລິການອິນເຕີເນັດ, ຜູ້ຜະລິດຮາດແວ, ຊອບແວ ລວມທັງຜູ້ນຳເຂົ້າ ແລະ ສົ່ງອອກຜະລິດຕະພັນ;

**16. ຜູ້ໃຊ້ບໍລິການ** ໝາຍເຖິງ ຜູ້ທີ່ໄດ້ຮັບການສະໜອງບໍລິການ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

**17. ການບໍລິການດ້ານອິນເຕີເນັດ** ໝາຍເຖິງ ການໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດສາກົນ, ພາຍໃນປະເທດ, ການໃຫ້ບໍລິການອິນເຕີເນັດກາເຟ;

**18. ອິນເຕີເນັດກາເຟ (Internet Cafe)** ໝາຍເຖິງ ຮ້ານ ຫຼື ສະຖານທີ່ໃດໜຶ່ງ ທີ່ສະໜອງບໍລິການແກ່ຜູ້ຊົມໃຊ້ທົ່ວໄປ ເພື່ອເຂົ້າເຖິງອິນເຕີເນັດ;

**19. ສູນກາງເຊື່ອມຕໍ່ອິນເຕີເນັດ** ໝາຍເຖິງ ຈຸດເຊື່ອມຕໍ່ລະຫວ່າງ ຜູ້ໃຫ້ບໍລິການອິນເຕີເນັດພາຍໃນປະເທດນຳກັນ ແລະ ລະຫວ່າງເຄືອຂ່າຍອິນເຕີເນັດພາຍໃນ ແລະ ສາກົນ;

**20. ໂອທີທີ (Over-The-Top – OTT)** ໝາຍເຖິງ ການບໍລິການສື່ສານດ້ວຍສຽງ, ຮູບພາບເຄື່ອນໄຫວ, ຮູບພາບບໍ່ເຄື່ອນໄຫວ ແລະ ຂໍ້ມູນ ຂ່າວສານອື່ນ ຜ່ານເຄືອຂ່າຍອິນເຕີເນັດ;

**21. ຄອນເຊັນເຕີ (Call Center)** ໝາຍເຖິງ ສູນບໍລິການແຈ້ງຕອບຂໍ້ມູນ ຫຼື ຊ່ວຍແນະນຳຜູ້ຊົມໃຊ້ ຜ່ານລະບົບເຄືອຂ່າຍສື່ສານ;

**22. ສື່ສັງຄົມອອນລາຍ (Social Network System –SNS)** ໝາຍເຖິງ ການສື່ສານຜ່ານລະບົບເຄືອຂ່າຍອິນເຕີເນັດ ເພື່ອເຜີຍແຜ່ຂໍ້ມູນ ຂ່າວສານສູ່ສາທາລະນະ ດ້ວຍການນຳໃຊ້ອຸປະກອນຄອມພິວເຕີ ແລະ ອຸປະກອນສື່ສານອື່ນ;

**23. ຄວາມປອດໄພດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ** ໝາຍເຖິງ ຄວາມປອດໄພຂອງເຄືອຂ່າຍຄອມພິວເຕີ, ລະບົບອຸປະກອນຮາດແວ, ຊອບແວ ແລະ ຂໍ້ມູນ ຂ່າວສານທັງໝົດ;

**24. ຂີ້ເຫຍື້ອເອເລັກໂຕຣນິກ (Electronic Waste)** ໝາຍເຖິງ ອຸປະກອນເອເລັກໂຕຣນິກທີ່ໝົດອາຍຸການນຳໃຊ້, ບໍ່ມີຄຸນນະພາບ ຫຼື ບໍ່ໄດ້ມາດຕະຖານ ແລະ ບໍ່ຕ້ອງການໃຊ້ແລ້ວ. ຂີ້ເຫຍື້ອເອເລັກໂຕຣນິກ ມີສ່ວນປະກອບທີ່ເປັນພິດ ສ້າງຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

**25. ຜູ້ອອກໃບຮັບຮອງເອເລັກໂຕຣນິກ (Certificate Authority - CA)** ໝາຍເຖິງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ໃຫ້ອອກໃບຢັ້ງຢືນຮັບຮອງຄວາມເປັນເຈົ້າຂອງລະຫັດສາທາລະນະ (Public Key);

**26. ໂຄງລ່າງພື້ນຖານລະຫັດຄວາມປອດໄພ (Public Key Infrastructure - PKI)** ໝາຍເຖິງ ເຕັກໂນໂລຊີຮັກຄວາມປອດໄພ ໃນການສົ່ງ-ຮັບຂໍ້ມູນ ຂ່າວສານ ຜ່ານເຄືອຂ່າຍອິນເຕີເນັດ ເປັນຕົ້ນ ການໂອນເງິນຜ່ານອິນເຕີເນັດ, ການຊື້ຂາຍຜ່ານອິນເຕີເນັດ, ການສົ່ງຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ລັດ ຊຸກຍູ້, ສົ່ງເສີມການຄົ້ນຄວ້າ, ການປະດິດສ້າງ ແລະ ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ດ້ວຍການສ້າງພື້ນຖານໂຄງລ່າງດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ,

ສ້າງເງື່ອນໄຂອຳນວຍຄວາມສະດວກ, ສະໜອງງົບປະມານ, ພັດທະນາຊັບພະຍາກອນມະນຸດ ພ້ອມທັງສົ່ງເສີມການບໍລິການ ແລະ ການນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພົວພັນຕ່າງປະເທດ ແລະ ການເຄື່ອນໄຫວອື່ນຢ່າງຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນ ແລະ ເຂົ້າຮ່ວມໃນການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ໃຫ້ນະໂຍບາຍຕາມກົດໝາຍ ແລະ ລະບຽບການ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ນັກຮຽນ, ນັກສຶກສາ, ປະຊາຊົນລາວບັນດາເຜົ່າ, ນັກບວດ, ຄົນພິການ, ຜູ້ດ້ອຍໂອກາດ ສາມາດຮຽນຮູ້ ແລະ ເຂົ້າເຖິງເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

## ມາດຕາ 5 ຫຼັກການກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນຍຸດທະສາດຂອງຂະແໜງການທີ່ກ່ຽວຂ້ອງ;
2. ຮັບປະກັນ ຄວາມລັບຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ຮັບປະກັນຄຸນນະພາບ, ຄວາມເປັນຈິງ, ຄວາມໝັ້ນຄົງ, ຄວາມປອດໄພ, ຄວາມວ່ອງໄວ ແລະ ຄວາມໂປ່ງໃສ;
4. ຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດ້ວຍການຕອບຕ້ານການສວຍໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ວຽກງານດັ່ງກ່າວ;
5. ສະເໝີພາບຕໍ່ໜ້າກົດໝາຍ, ບໍ່ເລືອກປະຕິບັດ ແລະ ແຂ່ງຂັນຢ່າງເປັນທຳ ໃນການຜະລິດ ແລະ ການບໍລິການ;
6. ເຄົາລົບ ແລະ ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ.

## ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ, ນຳໃຊ້ ແລະ ດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ ສປປ ລາວ.

## ມາດຕາ 7 ການຮ່ວມມືສາກົນ

ລັດ ຊຸກຍູ້, ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກ

ໂນໂລຊີ, ການຍົກລະດັບວິຊາສະເພາະ, ຄວາມຮູ້ ແລະ ຄວາມສາມາດຂອງບຸກຄະລາກອນ, ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

### ມາດຕາ 8 ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອຈຸດປະສົງໃດໜຶ່ງທີ່ສອດຄ່ອງກັບ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຖືກກັບມາດຕະຖານເຕັກນິກ ແລະ ຄວາມປອດໄພ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຫາ 34 ຂອງກົດໝາຍສະບັບນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງມີມາດຕະການປ້ອງກັນບໍ່ໃຫ້ມີຜົນກະທົບທາງລົບຈາກການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງເດັກນ້ອຍ ໂດຍສະເພາະການນຳໃຊ້ຂໍ້ມູນເອເລັກໂຕຣນິກຜ່ານເຄືອຂ່າຍຄອມພິວເຕີ.

### ມາດຕາ 9 ການນຳໃຊ້ຂໍ້ມູນເອເລັກໂຕຣນິກ

ການນຳໃຊ້ຂໍ້ມູນເອເລັກໂຕຣນິກ ມີ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດນຳໃຊ້ຂໍ້ມູນເອເລັກໂຕຣນິກ ເຂົ້າໃນຈຸດປະສົງໃດໜຶ່ງທີ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ;
2. ການສະໜອງ, ການແລກປ່ຽນ, ການຮັບ, ການສົ່ງ, ການເກັບກຳ ແລະ ການນຳໃຊ້ຂໍ້ມູນເອເລັກໂຕຣນິກ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
3. ການນຳໃຊ້ຂໍ້ມູນຜ່ານອິນເຕີເນັດ ຕ້ອງຮັບປະກັນໃຫ້ມີຄວາມຖືກຕ້ອງ, ປອດໄພ ແລະ ໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນດັ່ງກ່າວ.
4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດນຳໃຊ້ ຫຼື ອ້າງອີງເນື້ອໃນຂໍ້ມູນເອເລັກໂຕຣນິກທີ່ໄດ້ຮັບອະນຸຍາດຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຕ້ອງບອກແຫຼ່ງຂໍ້ມູນທີ່ໄດ້ມາໃຫ້ຖືກຕ້ອງ.

### ມາດຕາ 10 ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງອົງການຈັດຕັ້ງລັດ

ອົງການຈັດຕັ້ງລັດ ນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຂົ້າໃນການບໍລິຫານວຽກງານພາຍໃນຂອງຕົນຢ່າງມີປະສິດທິພາບ, ເຊື່ອມຕໍ່ເຂົ້າກັບໂຄງລ່າງພື້ນຖານ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ລະບົບບໍລິຫານລັດແບບເອເລັກໂຕຣນິກ.

ອົງການຈັດຕັ້ງລັດ ຕ້ອງມີແຜນພັດທະນາ ແລະ ແຜນນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຕົນ ໃນແຕ່ລະໄລຍະໃຫ້ສອດຄ່ອງກັບນະໂຍບາຍ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານແຫ່ງຊາດ.

**ມາດຕາ 11 ເນື້ອໃນການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງອົງການຈັດຕັ້ງລັດ**

ເນື້ອໃນການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງອົງການຈັດຕັ້ງລັດ ມີ ດັ່ງນີ້:

1. ການແລກປ່ຽນຂໍ້ມູນ ຂ່າວສານ ລະຫວ່າງອົງການຈັດຕັ້ງຂອງລັດດ້ວຍກັນ ເພື່ອສັງລວມ ແລະ ປັບປຸງຂໍ້ມູນ ຂ່າວສານໃຫ້ມີປະສິດທິພາບ;
2. ການເກັບຮັກສາຖານຂໍ້ມູນໃຫ້ມີຄວາມປອດໄພ ແລະ ສາມາດເຜີຍແຜ່ບັນດາຂໍ້ມູນຂ່າວສານ ທີ່ເປັນປະໂຫຍດໃຫ້ສັງຄົມໄດ້ຢ່າງທົ່ວເຖິງ;
3. ການບໍລິການແລກປ່ຽນ, ສະໜອງຂໍ້ມູນ ຂ່າວສານ ແລະ ລວບລວມຂໍ້ສະເໜີຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ໃນລະບົບເຄືອຂ່າຍ;
4. ການໃຫ້ບໍລິການປະຊາຊົນເພື່ອພັດທະນາຄວາມຮູ້ ແລະ ປັບປຸງຄຸນນະພາບຊີວິດການເປັນຢູ່;
5. ການສຶກສາ, ການຝຶກອົບຮົມພາຍໃນອົງການຈັດຕັ້ງຂອງລັດ ແລະ ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ;
6. ການແລກປ່ຽນຂໍ້ມູນ ຂ່າວສານ ເພື່ອເຊື່ອມໂຍງກັບຕ່າງປະເທດ, ພາກພື້ນ ແລະ ສາກົນ.

**ມາດຕາ 12 ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອການບໍລິການຂອງອົງການຈັດຕັ້ງລັດ**

ອົງການຈັດຕັ້ງລັດ ຕ້ອງສະໜອງ ແລະ ບໍລິການຂໍ້ມູນ ຂ່າວສານຂອງຕົນສູ່ສັງຄົມ ໂດຍຜ່ານເວັບໄຊ ຫຼື ໂປຣແກຣມນຳໃຊ້ຕ່າງໆ ພ້ອມທັງຮັບປະກັນ ຄວາມຖືກຕ້ອງ, ປອດໄພ ແລະ ທັນການ ໂດຍໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ.

**ມາດຕາ 13 ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງພາກທຸລະກິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງພາກທຸລະກິດ ສາມາດນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຂົ້າໃນການເຮັດສັນຍາ, ການຊື້, ການຂາຍ ສິນຄ້າ ຫຼື ຊັບສິ່ງຂອງ, ການສະໜອງ, ການບໍລິການ, ການຊຳລະ ແລະ ການດຳເນີນທຸລະກິດອື່ນຂອງຕົນ ໂດຍໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງຂອງພາກທຸລະກິດ ຕ້ອງຮັບຜິດຊອບຕໍ່ຄວາມປອດໄພໃນການນຳໃຊ້ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ຂໍ້ມູນເອເລັກໂຕຣນິກຂອງຕົນເອງ ເພື່ອບໍ່ໃຫ້ມີຜົນກະທົບກັບຜູ້ອື່ນ.

**ມາດຕາ 14 ສິດນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໃນພາວະສຸກເສີນ**

ລັດ ມີສິດນຳໃຊ້ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງທຸກພາກສ່ວນໃນພາວະສຸກເສີນດັ່ງນີ້:

1. ການສະກັດກັ້ນ ແລະ ເຕືອນໄພພິບັດ ເປັນຕົ້ນ ແຜ່ນດິນໄຫວ, ໄພນ້ຳຖ້ວມ, ລົມພາຍຸ, ອັກຄີໄພ ແລະ ອື່ນໆ;

2. ການບັນເທົາ ແລະ ປົວແປງຄວາມເສຍຫາຍທີ່ເກີດຈາກໄພພິບັດ ເປັນຕົ້ນ ການກອບກູ້ຊີວິດ, ການຊ່ວຍເຫຼືອຜູ້ປະສົບໄພ ແລະ ອື່ນໆ;

3. ການສະກັດກັ້ນພະຍາດລະບາດຮ້າຍແຮງຕ່າງໆ;

4. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພຂອງສັງຄົມ ແລະ ການສະກັດກັ້ນອາຊະຍາກຳ.

**ມາດຕາ 15 ການສ້າງເວັບໄຊ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສ້າງເວັບໄຊ, ຄຸ້ມຄອງເນື້ອໃນ ແລະ ບໍລິຫານຈັດການເວັບໄຊຂອງຕົນ ໂດຍຮັບປະກັນເນື້ອໃນ ແລະ ຄວາມຖືກຕ້ອງຂອງຂໍ້ມູນ ຂ່າວສານ, ຄວາມປອດໄພຂອງຜູ້ຊົມໃຊ້ ແລະ ສາມາດເຂົ້າເຖິງໄດ້ຢ່າງສະດວກວ່ອງໄວ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

## ພາກທີ III
## ການພັດທະນາວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

### ໝວດທີ 1
### ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 16 ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນ ການພັດທະນາພື້ນຖານໂຄງລ່າງເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ, ຊອບແວ, ຮາດແວ, ລະບົບອັດຕະໂນມັດ, ລະບົບຂໍ້ມູນຂ່າວສານ, ຖານຂໍ້ມູນ ແລະ ລະບົບປ້ອງກັນຄວາມປອດໄພ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນ.

**ມາດຕາ 17 ການພັດທະນາໂຄງລ່າງພື້ນຖານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ໂຄງລ່າງພື້ນຖານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນ ລະບົບອຸປະກອນສື່ສານທີ່ນຳໃຊ້ເຂົ້າໃນ ການຜະລິດ, ການສົ່ງ, ການຮັບ, ການເກັບ ແລະ ການຈັດການຂໍ້ມູນ ຂ່າວສານ ຊຶ່ງປະກອບດ້ວຍ ເຄືອຂ່າຍໂທລະຄົມມະນາຄົມ, ເຄືອຂ່າຍຄອມພິວເຕີ, ເຄືອຂ່າຍອິນເຕີເນັດ, ເຄືອຂ່າຍວິທະຍຸກະຈາຍສຽງ, ໂທລະພາບ, ສູນຂໍ້ມູນ ຂ່າວສານ, ສູນກາງເຊື່ອມຕໍ່ອິນເຕີເນັດ ແລະ ລະບົບຢັ້ງຢືນລະຫັດຄວາມປອດໄພ.

ການພັດທະນາໂຄງລ່າງພື້ນຖານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງ ສ້າງ, ປັບປຸງ ແລະ ປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ຮັບປະກັນຄຸນນະພາບ, ຄວາມປອດໄພ ແລະ ໃຫ້ເຊື່ອມຕໍ່ກັບພາຍໃນປະເທດ ແລະ ຕ່າງປະເທດໄດ້ ໂດຍຜ່ານສູນກາງເຊື່ອມຕໍ່ອິນເຕີເນັດ.

### ມາດຕາ 18 ການພັດທະນາຊອບແວ

ການພັດທະນາຊອບແວ ແມ່ນ ການສ້າງ ແລະ ປັບປຸງຜະລິດຕະພັນຊອບແວ ທີ່ນໍາໃຊ້ໃນລະບົບຄອມພິວເຕີ, ລະບົບຖານຂໍ້ມູນ, ລະບົບເຄືອຂ່າຍ ແລະ ອຸປະກອນເອເລັກໂຕຣນິກອື່ນ ໂດຍຜ່ານຂະບວນການຄົ້ນຄວ້າ, ການອອກແບບ, ການຂຽນ ແລະ ການສ້າງລະຫັດໂປຣແກຣມເພື່ອຕອບສະໜອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີສິດນໍາໃຊ້, ພັດທະນາບັນດາຊອບແວ ທັງຊອບແວເປີດ ແລະ ຊອບແວປິດ ເຂົ້າໃນວຽກງານຂອງຕົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ວຽກງານພັດທະນາຊອບແວໄດ້ຮັບການສົ່ງເສີມດ້ວຍການໃຫ້ບູລິມະສິດ ແກ່ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ແລະ ນັກພັດທະນາຢູ່ພາຍໃນປະເທດ ເພື່ອພັດທະນາວຽກງານດັ່ງກ່າວໃຫ້ທັນສະໄໝ ແລະ ເປັນເຄື່ອງມືຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

### ມາດຕາ 19 ການພັດທະນາຮາດແວ

ການພັດທະນາຮາດແວ ແມ່ນ ການສ້າງ ແລະ ປັບປຸງການອອກແບບ ແລະ ການທົດສອບຄອມພິວເຕີ ແລະ ອຸປະກອນເອເລັກໂຕຣນິກອື່ນ ໃຫ້ມີປະສິດທິພາບ ແລະ ເຮັດວຽກຮ່ວມກັບຊອບແວໃຫ້ດີຂຶ້ນກວ່າເກົ່າ ເປັນຕົ້ນ ແຜງວົງຈອນເອເລັກໂຕຣນິກ, ສ່ວນປະກອບເຄື່ອງຄອມພິວເຕີ ແລະ ອື່ນໆ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີສິດນໍາໃຊ້, ພັດທະນາບັນດາຮາດແວເຂົ້າໃນວຽກງານຂອງຕົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

### ມາດຕາ 20 ການພັດທະນາລະບົບອັດຕະໂນມັດ

ການພັດທະນາລະບົບອັດຕະໂນມັດ ແມ່ນ ການສ້າງ ແລະ ປັບປຸງເຕັກໂນໂລຊີທີ່ເຮັດວຽກຕາມໂປຣແກຣມ ດ້ວຍການນໍາໃຊ້ຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກ ເປັນຕົວຄວບຄຸມ ເພື່ອໃຫ້ລະບົບການເຮັດວຽກດໍາເນີນຢ່າງອັດຕະໂນມັດ ແລະ ຖືກຕ້ອງ ເປັນຕົ້ນ ລະບົບທີ່ມີການບັນຊາຄວບຄຸມໂດຍຜ່ານລະບົບສື່ສານ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ພັດທະນາລະບົບອັດຕະໂນມັດ ໂດຍເຊື່ອມຕໍ່ເຄືອຂ່າຍຄອມພິວເຕີ ຕ້ອງປະຕິບັດຕາມມາດຕະຖານເຕັກນິກ ພ້ອມທັງຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ການພັດທະນາລະບົບຂໍ້ມູນ ຂ່າວສານ**

ການພັດທະນາລະບົບຂໍ້ມູນ ຂ່າວສານ ແມ່ນ ການສ້າງ, ປັບປຸງ ແລະ ບໍລິຫານລະບົບຂໍ້ມູນ ຂ່າວສານ ເປັນຕົ້ນ ລະບົບຄລາວຄອມພິວຕິ້ງ, ລະບົບການຂາຍ, ລະບົບບັນຊີ, ລະບົບບໍລິການຜ່ານອິນເຕີເນັດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີສິດນຳໃຊ້, ພັດທະນາລະບົບຂໍ້ມູນ ຂ່າວສານ ເຂົ້າໃນວຽກງານຂອງຕົນໂດຍຮັບປະກັນ ມາດຕະຖານເຕັກນິກ, ຄຸນນະພາບ ແລະ ຄວາມປອດໄພ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ວຽກງານພັດທະນາລະບົບຂໍ້ມູນ ຂ່າວສານ ໄດ້ຮັບການສົ່ງເສີມດ້ວຍການໃຫ້ບູລິມະສິດແກ່ ນັກຮຽນ, ນັກສຶກສາ ແລະ ນັກພັດທະນາຢູ່ພາຍໃນປະເທດ ເພື່ອພັດທະນາລະບົບຂໍ້ມູນ ຂ່າວສານພາຍໃນປະເທດໃຫ້ມີຄວາມຫຼາກຫຼາຍ ເພື່ອຫຼຸດຜ່ອນການນຳໃຊ້ຂໍ້ມູນ ຂ່າວສານຂອງຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 22 ການພັດທະນາຖານຂໍ້ມູນ**

ການພັດທະນາຖານຂໍ້ມູນ ແມ່ນ ການສ້າງ ແລະ ປັບປຸງລະບົບເກັບຮັກສາຂໍ້ມູນໃຫ້ມີປະສິດທິພາບ ແລະ ມີຄວາມປອດໄພສູງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີສິດນຳໃຊ້, ພັດທະນາຖານຂໍ້ມູນເຂົ້າໃນວຽກງານຂອງຕົນໂດຍຮັບປະກັນ ຄຸນນະພາບ, ຄວາມປອດໄພ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 23 ການພັດທະນາລະບົບປ້ອງກັນຄວາມປອດໄພ**

ການພັດທະນາລະບົບປ້ອງກັນຄວາມປອດໄພ ແມ່ນ ການສ້າງ ແລະ ປັບປຸງລະບົບປ້ອງກັນຄວາມປອດໄພຂອງຂໍ້ມູນ ຈາກການໂຈມຕີ ຫຼື ໂຈລະກຳ ທີ່ມາຈາກທັງພາຍໃນ ແລະ ຕ່າງປະເທດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີສິດນຳໃຊ້, ພັດທະນາລະບົບປ້ອງກັນຄວາມປອດໄພ ເຂົ້າໃນວຽກງານຂອງຕົນ ຕ້ອງຮັບປະກັນມາດຕະຖານເຕັກນິກ, ຄຸນນະພາບ, ຄວາມປອດໄພ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການໃນການພັດທະນາ ແລະ ຄຸ້ມຄອງໂຄງລ່າງພື້ນຖານລະຫັດຄວາມປອດໄພແຫ່ງຊາດ ລວມທັງ ຜູ້ອອກໃບຮັບຮອງເອເລັກໂຕຣນິກ.

ສຳລັບລະບົບປ້ອງກັນຄວາມປອດໄພນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການພັດທະນາບຸກຄະລາກອນດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 24 ການພັດທະນາບຸກຄະລາກອນດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງມີແຜນການ, ແຜນງົບປະມານໃນການສ້າງ, ຍົກລະດັບດ້ານວິຊາສະເພາະ, ເຕັກນິກວິຊາການ ແລະ ນໍາໃຊ້ບຸກຄະລາກອນ ເພື່ອຕອບສະໜອງວຽກງານຂອງຕົນ.

**ມາດຕາ 25 ການພັດທະນາຫຼັກສູດດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄົ້ນຄວ້າພັດທະນາຫຼັກສູດການຮຽນ, ການສອນ ແລະ ການຝຶກອົບຮົມດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງໄດ້ຜ່ານການກວດກາ ແລະ ເຫັນດີເປັນເອກະພາບຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຮັບຮອງຈາກກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ ຄົ້ນຄວ້າເອົາຫຼັກສູດການຮຽນ, ການສອນກ່ຽວກັບ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຂົ້າໃນຫຼັກສູດການສຶກສາແຫ່ງຊາດ.

## ໝວດທີ 3
## ອຸດສາຫະກໍາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 26 ການຫັນເປັນອຸດສາຫະກໍາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງໄປຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ ແລະ ການພັດທະນາຂອງຕ່າງປະເທດ, ພາກພື້ນ ແລະ ສາກົນ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ.

**ມາດຕາ 27 ຂອບເຂດອຸດສາຫະກໍາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ຂອບເຂດອຸດສາຫະກໍາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນ ຂອບເຂດພື້ນທີ່ສະເພາະທີ່ສ້າງຂຶ້ນ ໃຫ້ເໝາະສົມສໍາລັບການດໍາເນີນກິດຈະການທາງດ້ານ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຊຶ່ງປະກອບດ້ວຍ ໂຄງລ່າງພື້ນຖານ ແລະ ສະພາບແວດລ້ອມ ທີ່ເໝາະສົມ ເປັນຕົ້ນ ຖະໜົນຫົນທາງ, ໄຟຟ້າ, ນໍ້າປະປາ, ໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ.

ລັດ ກໍານົດຂອບເຂດອຸດສາຫະກໍາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອເປັນບ່ອນຄົ້ນຄວ້າ, ພັດທະນາ, ຜະລິດ, ບໍລິການ ແລະ ຝຶກອົບຮົມທາງດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລົງທຶນ ແລະ ດຳເນີນທຸລະກິດນັ້ນ ຈະໄດ້ຮັບນະໂຍບາຍ ແລະ ບູລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 28 ເງື່ອນໄຂສົ່ງເສີມຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານທີ່ໄດ້ຮັບການສົ່ງເສີມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມຕ້ອງການສູງ ແລະ ສ້າງມູນຄ່າເພີ່ມ ຢູ່ຕະຫຼາດພາຍໃນປະເທດ;
2. ມີຄວາມສາມາດໃນການສົ່ງອອກ;
3. ມີການສົ່ງເສີມການຄົ້ນຄວ້າ ແລະ ການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ມີປະສິດທິພາບຕໍ່ຂະແໜງເສດຖະກິດອື່ນ;
4. ຕອບສະໜອງຄວາມຕ້ອງການ ໃນວຽກງານຄຸ້ມຄອງບໍລິຫານລັດ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

### ມາດຕາ 29 ຕະຫຼາດຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ລັດ ໃຫ້ບູລິມະສິດ ແລະ ນະໂຍບາຍຕ່າງໆ ເປັນຕົ້ນ ການຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ຕາມທີ່ກົດໝາຍໄດ້ກຳນົດໄວ້, ການສົ່ງເສີມການຊື້ ແລະ ການນຳໃຊ້ຜະລິດຕະພັນພາຍໃນ, ການຈັດງານວາງສະແດງຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ການຊຸກຍູ້ສົ່ງເສີມໃຫ້ວິສາຫະກິດພາຍໃນປະເທດ ເຂົ້າຮ່ວມງານວາງສະແດງຢູ່ພາຍໃນ ແລະ ຕ່າງປະເທດ ແນໃສ່ສົ່ງເສີມຕະຫຼາດຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານພາຍໃນປະເທດ.

# ພາກທີ IV
# ມາດຕະຖານເຕັກນິກ ແລະ ຄວາມປອດໄພດ້ານເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ

## ໝວດທີ 1
## ມາດຕະຖານເຕັກນິກດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

### ມາດຕາ 30 ການກຳນົດມາດຕະຖານເຕັກນິກ

ມາດຕະຖານເຕັກນິກດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນ ມາດຕະຖານກ່ຽວກັບອຸປະກອນ, ຊອບແວ ແລະ ຜະລິດຕະພັນ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເປັນຕົ້ນ ການສົ່ງສັນຍານ, ການເຊື່ອມຕໍ່, ພາສາລາວ, ຕົວອັກສອນລາວ, ຄຸນນະພາບ, ການບໍລິການ, ລະບົບຂໍ້ມູນ ແລະ ຄວາມປອດໄພ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເປັນຜູ້ກຳນົດມາດຕະຖານເຕັກນິກດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ແລ້ວສະເໜີຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີປະກາດການນຳໃຊ້.

**ມາດຕາ 31 ການກຳນົດຄຸນນະພາບການບໍລິການ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການກຳນົດຄຸນນະພາບຂອງການບໍລິການເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ມາດຕະຖານ ຂອງ ສປປ ລາວ ແລະ ມາດຕະຖານສາກົນ.

**ມາດຕາ 32 ການກວດກາມາດຕະຖານເຕັກນິກໃນເວລານຳເຂົ້າ ແລະ ຈຳໜ່າຍ**

ໃນເວລານຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ອຸປະກອນເອເລັກໂຕຣນິກອື່ນ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນມາດຕະຖານດ້ານເຕັກນິກ ແລະ ຄຸນນະພາບຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານໂດຍສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ຄວາມປອດໄພດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 33 ຄວາມປອດໄພດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງອົງການຈັດຕັ້ງລັດ**

ກະຊວງ, ອົງການຈັດຕັ້ງອື່ນຂອງລັດ ທີ່ນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງມີລະບົບປ້ອງກັນເຄືອຂ່າຍຄອມພິວເຕີ, ເຊີເວີ, ຊອບແວ, ຖານຂໍ້ມູນ, ຂໍ້ມູນ ແລະ ລະບົບສຳຮອງຂອງຕົນ ໂດຍປະສານສົມທົບກັບກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອເຮັດໃຫ້ລະບົບດັ່ງກ່າວ ສາມາດເຮັດວຽກຮ່ວມກັນໄດ້ ແລະ ຮັບປະກັນຄວາມປອດໄພ.

**ມາດຕາ 34 ຄວາມປອດໄພດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການ ຕ້ອງມີລະບົບເຊີເວີສຳຮອງ ເພື່ອເກັບຮັກສາຂໍ້ມູນ ແລະ ຮັບປະກັນການເຮັດວຽກຂອງລະບົບນັ້ນ ໄດ້ຢ່າງຕໍ່ເນື່ອງ, ມີລະບົບປ້ອງກັນ ເຄືອຂ່າຍຄອມພິວເຕີ, ເຊີເວີ, ຊອບແວ, ຖານຂໍ້ມູນ ແລະ ຂໍ້ມູນໃຫ້ມີຄວາມປອດໄພສູງສຸດ ເປັນຕົ້ນ ລະບົບປ້ອງກັນໄວຣັດ ຫຼື ໂປຣແກຣມເມວແວ, ລະບົບປ້ອງກັນການໂຈມຕີເຄືອຂ່າຍ, ລະບົບປ້ອງກັນການເຂົ້າເຖິງຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ, ມີລະບຽບການເຂົ້າ-ອອກ ສູນຂໍ້ມູນ ແລະ ລະບຽບການຮັກສາຄວາມປອດໄພຢ່າງເປັນປະຈຳ.

## ພາກທີ V
## ການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 35 ການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ.

**ມາດຕາ 36 ເງື່ອນໄຂຂອງການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການດຳເນີນທຸລະກິດ ກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງມີເງື່ອນໄຂພື້ນຕໍ່ດັ່ງນີ້:

1. ມີທຶນ, ສຳນັກງານ, ອຸປະກອນ, ເຄື່ອງມື ຢ່າງເໝາະສົມ;
2. ມີຜູ້ຊ່ຽວຊານ, ນັກວິຊາການທີ່ມີປະສົບການ ຈຳນວນເໝາະສົມກັບຂະໜາດຂອງທຸລະກິດ;
3. ມີບົດວິພາກເສດຖະກິດ-ເຕັກນິກຕາມແຕ່ລະປະເພດທຸລະກິດ.

**ມາດຕາ 37 ປະເພດທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີ ສອງປະເພດ ດັ່ງນີ້:

1. ການບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
2. ການຜະລິດດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

**ມາດຕາ 38 ການບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີ ດັ່ງນີ້:

1. ອິນເຕີເນັດ;
2. ຄຳປຶກສາ;
3. ພັດທະນາ ແລະ ຕິດຕັ້ງ ຊອບແວ;
4. ຂໍ້ມູນໃນຮູບແບບເອເລັກໂຕຣນິກ;
5. ການສຶກສາ ແລະ ການຝຶກອົບຮົມ;
6. ຮັບຝາກ ແລະ ໃຫ້ເຊົ່າພື້ນທີ່ຈັດເກັບຂໍ້ມູນ ເປັນຕົ້ນ ສູນຂໍ້ມູນ ຂ່າວສານ, ລະບົບຄລາວຄອມພິວຕິ້ງ;
7. ຄວາມປອດໄພ;
8. ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນ, ຕິດຕັ້ງ, ບຳລຸງຮັກສາ ແລະ ສ້ອມແປງອຸປະກອນ;

9. ບໍລິການອື່ນດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຊັ່ນ ໂອທີທີ, ອິນເຕີເນັດ ເຊື່ອມຕໍ່ທຸກອຸປະກອນ, ຄອນເຊັ້ນເຕີ, ສື່ສັງຄົມອອນລາຍ.

**ມາດຕາ 39 ການຜະລິດດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການຜະລິດດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີ ດັ່ງນີ້:

1. ການຜະລິດ ອຸປະກອນຮາດແວ;
2. ການປະກອບ ອຸປະກອນຮາດແວ;
3. ການຜະລິດ ຊອບແວ.

## ພາກທີ VI
## ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ

**ມາດຕາ 40 ສິດຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການ ມີ ສິດ ດັ່ງນີ້:

1. ໃຫ້ບໍລິການຕາມປະເພດທຸລະກິດ ທີ່ໄດ້ຮັບອະນຸຍາດ;
2. ໂຈະ ຫຼື ຢຸດເຊົາ ການໃຫ້ບໍລິການແກ່ຜູ້ໃຊ້ບໍລິການ ໃນກໍລະນີ ບໍ່ຊໍາລະຄ່າບໍລິການ ຫຼື ນໍາໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານທີ່ຂັດກັບກົດໝາຍ;
3. ສະເໜີຂະຫຍາຍເຄືອຂ່າຍ ຫຼື ຂອບເຂດການໃຫ້ບໍລິການຕໍ່ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອພິຈາລະນາ;
4. ສະເໜີຂໍເຊື່ອມຕໍ່ເຄືອຂ່າຍຂອງຕົນເຂົ້າກັບເຄືອຂ່າຍຂອງຜູ້ອື່ນ;
5. ປົກປ້ອງສິດ ແລະ ຜົນປະໂຫຍດໃນການໃຫ້ບໍລິການຂອງຕົນ;
6. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 ພັນທະຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການ ມີ ພັນທະ ດັ່ງນີ້:

1. ຮັບປະກັນການໃຫ້ບໍລິການຢ່າງທົ່ວເຖິງ, ມີຄຸນນະພາບ, ມີຄວາມສະດວກ, ວ່ອງໄວ ແລະ ເປັນທໍາ;
2. ມີແຜນຟື້ນຟູລະບົບການໃຫ້ບໍລິການ ແລະ ລາຍງານດ່ວນ ໃນກໍລະນີເກີດໄພພິບັດ ຫຼື ພາວະສຸກເສີນ;
3. ມີແຜນບໍາລຸງຮັກສາ, ແຜນປ້ອງກັນ, ລາຍງານ ແລະ ຮັບມືການໂຈມຕີທາງດ້ານ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
4. ໃຫ້ການຮ່ວມມື, ຕິດຕາມ, ກວດກາ ແລະ ສະກັດກັ້ນ ທຸກການເຄື່ອນໄຫວດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຜົນກະທົບຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວັດທະນະທໍາ-ສັງຄົມ;

5. ຮັບຜິດຊອບຕໍ່ຂໍ້ມູນ ຂ່າວສານຂອງຕົນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ຜູ້ອື່ນ;

6. ແນະນຳກ່ຽວກັບເຕັກນິກ ແລະ ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

7. ໃຫ້ບູລິມະສິດໃນການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແກ່ອົງການຈັດຕັ້ງຂອງລັດ;

8. ໃຫ້ຄວາມຮ່ວມມືໃນການຕິດຕາມ, ກວດກາຂອງຂະແໜງການທີ່ກ່ຽວຂ້ອງຂອງລັດ;

9. ຊຳລະຄ່ານຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ແລະ ພັນທະເສຍພາສີ, ອາກອນ;

10. ເກັບຮັກສາຂໍ້ມູນຂອງຜູ້ໃຊ້ບໍລິການ, ປະຫວັດການເຄື່ອນໄຫວ ແລະ ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງຢ່າງໜ້ອຍ ເກົ້າສິບວັນ;

11. ກຳຈັດຂີ້ເຫຍື້ອເອເລັກໂຕຣນິກ ໂດຍບໍ່ສ້າງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ, ສິ່ງແວດລ້ອມສັງຄົມ, ທຳມະຊາດ ແລະ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

12. ມີສ່ວນຮ່ວມໃນການສ້າງກິດຈະກຳຊ່ວຍເຫຼືອສັງຄົມ, ພັດທະນາຊັບພະຍາກອນມະນຸດ ແລະ ກິດຈະກຳອື່ນ ທີ່ສົ່ງເສີມການພັດທະນາເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນ ຕໍ່ຂະແໜງການທີ່ມີສິດກ່ຽວຂ້ອງຢ່າງໜ້ອຍ ປີລະຄັ້ງ;

14. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີ ສິດ ດັ່ງນີ້:

1. ໄດ້ຮັບການບໍລິການ ຢ່າງມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ເປັນທຳ;

2. ໄດ້ຮັບການແນະນຳກ່ຽວກັບການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ສະເໜີຕໍ່ຜູ້ໃຫ້ບໍລິການ ຫຼື ອົງການທີ່ມີສິດກ່ຽວຂ້ອງຂອງລັດ ປັບປຸງລະບຽບການ, ອັດຕາຄ່າທຳນຽມ, ຄ່າບໍລິການ ແລະ ຄຸນນະພາບຂອງການໃຫ້ບໍລິການ;

4. ຍື່ນຄຳສະເໜີກ່ຽວກັບການບໍລິການທີ່ບໍ່ເປັນທຳ ຫຼື ລະເມີດກົດໝາຍ ແລະ ລະບຽບການຕໍ່ຂະແໜງການທີ່ກ່ຽວຂ້ອງ;

5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີ ພັນທະ ດັ່ງນີ້:

1. ນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຢ່າງຖືກຕ້ອງ ແລະ ເໝາະສົມ;

2. ຮັບຜິດຊອບຕໍ່ຂໍ້ມູນ ຂ່າວສານຂອງຕົນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ຜູ້ອື່ນ;

3. ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຢ່າງເປັນປົກກະຕິ;

4. ກຳຈັດຂີ້ເຫຍື້ອເອເລັກໂຕຣນິກໂດຍບໍ່ສ້າງຜົນກະທົບຕໍ່ການດຳລົງຊີວິດຂອງ ປະຊາຊົນ, ສິ່ງແວດລ້ອມສັງຄົມ, ທຳມະຊາດ ແລະ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ VII
## ຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 44 ຄ່າທຳນຽມ

ຄ່າທຳນຽມ ແມ່ນ ຄ່າສິດຄຸ້ມຄອງບໍລິຫານຂອງລັດ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ໂດຍຜ່ານຂະແໜງການຂອງລັດ ດ້ວຍຮູບການອອກໃບຢັ້ງຢືນ ແລະ ໃບອະນຸຍາດຕ່າງໆ.

ການເກັບຄ່າທຳນຽມ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃຫ້ປະຕິບັດຕາມລະບຽບການ.

### ມາດຕາ 45 ຄ່າບໍລິການ

ຄ່າບໍລິການ ແມ່ນ ຄ່າຮັບໃຊ້ທາງດ້ານບໍລິຫານວິຊາການ ຈາກຂະແໜງການຂອງລັດໃນການເຄື່ອນໄຫວຮັບໃຊ້ສັງຄົມໂດຍບໍ່ຫວັງຜົນກຳໄລ ແລະ ເພື່ອເປັນການຊ່ວຍໝູນຄ່າໃຊ້ຈ່າຍງົບປະມານຂອງລັດ.

ການເກັບຄ່າບໍລິການ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃຫ້ປະຕິບັດຕາມລະບຽບການ.

## ພາກທີ VIII
## ຂໍ້ຫ້າມ

### ມາດຕາ 46 ຂໍ້ຫ້າມສຳລັບພະນັກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ຫ້າມພະນັກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີພຶດຕິກຳ ດັ່ງນີ້:

1. ເຂົ້າຫາ, ທຳລາຍ, ດັດແປງ, ປອມແປງ, ສະໜອງ, ນຳໃຊ້ ຫຼື ເຜີຍແຜ່ຂໍ້ມູນ ຂ່າວສານ ຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍບໍ່ໄດ້ຮັບອະນຸຍາດ;
2. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ຂົ່ມຂູ່ຜູ້ອື່ນ, ສົມຮູ້ຮ່ວມຄິດ ເພື່ອຫາຜົນປະໂຫຍດ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ, ລວມໝູ່ ຫຼື ສັງຄົມ;
3. ເປີດເຜີຍຂໍ້ມູນ ຫຼື ເອກະສານລັບຂອງລັດ ຫຼື ເອກະສານລັບທາງລັດຖະການ;
4. ທວງເອົາ, ຂໍເອົາ, ຮັບສິນບົນ ຫຼື ຜົນປະໂຫຍດອື່ນ, ກົດໜ່ວງຖ່ວງດຶງການພິຈາລະນາເອກະສານຕ່າງໆ;
5. ກົດໜ່ວງຖ່ວງດຶງ ຜະລິດຕະພັນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ໄດ້ຮັບອະນຸຍາດ ຫຼື ຢັ້ງຢືນແລ້ວ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 47 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ຫ້າມຜູ້ໃຫ້ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຂາຍ, ໂອນ, ໃຫ້ເຊົ່າ ຫຼື ໃຫ້ຢືມ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ນຳເຂົ້າອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຫຼື ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ນຳເຂົ້າ ຂີ້ເຫຍື້ອເອເລັກໂຕຣນິກ ຫຼື ນຳເຂົ້າອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານທີ່ບໍ່ໄດ້ມາດຕະຖານ;

5. ເຂົ້າຫາ, ລວບລວມ, ນຳໃຊ້, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍບໍ່ໄດ້ຮັບອະນຸຍາດ;

6. ສະໜອງ, ນຳໃຊ້, ດັດແປງ, ທຳລາຍ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນທີ່ຕົນໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດ;

7. ຮັບຂໍ້ມູນ ຂ່າວສານ ທີ່ມີລັກສະນະ ລາມົກອະນາຈານ, ບິດເບືອນ, ສົ່ງເສີມການກໍ່ການຮ້າຍ ຫຼື ຕໍ່ຕ້ານລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ຕົນໄດ້ຮູ້;

8. ຜະລິດ, ປະກອບ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ ຫຼື ໃຫ້ບໍລິການສ້ອມແປງອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຫຼື ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ ໂດຍບໍ່ໄດ້ມາດຕະຖານ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 48 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການ**

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກຳ ດັ່ງນີ້:

1. ເຂົ້າຫາ, ລວບລວມ, ສະໜອງ, ນຳໃຊ້, ດັດແປງ, ທຳລາຍ, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອໂຄສະນາຊວນເຊື່ອ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

3. ສ້າງ ແລະ ເຜີຍແຜ່ຂໍ້ມູນ ຂ່າວສານ ທີ່ມີລັກສະນະ ລາມົກອະນາຈານ, ບິດເບືອນ, ສົ່ງເສີມການກໍ່ການຮ້າຍ ຫຼື ຕໍ່ຕ້ານລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

4. ທຳລາຍ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເປັນຕົ້ນ ໂຄງລ່າງພື້ນຖານ, ເຄືອຂ່າຍເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 49 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມໂດຍຄູ່ກໍລະນີ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 50 ການປະນີປະນອມໂດຍຄູ່ກໍລະນີ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ບໍ່ແມ່ນການກະທຳຜິດທາງອາຍາ ຄູ່ກໍລະນີສາມາດປຶກສາຫາລື ແລະ ປະນີປະນອມກັນໂດຍສັນຕິວິທີ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 51 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານທີ່ບໍ່ສາມາດຕົກລົງກັນໄດ້ ຄູ່ກໍລະນີມີສິດສະເໜີຕໍ່ ອົງການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 52 ການແກ້ໄຂຂໍ້ຂັດແຍ່ງໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຄູ່ກໍລະນີມີສິດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເພື່ອພິຈາລະນາແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 53 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວຂ້ອງກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ ຕາມກົດໝາຍ.

**ມາດຕາ 54 ການແກ້ໄຂທີ່ມີລັກສະນະສາກົນ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ X
# ການຄຸ້ມຄອງ ແລະ ກວດກາ ວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 55 ອົງການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງອື່ນ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ປະກອບດ້ວຍ:

1. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ;
3. ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 56 ສິດ ແລະ ໜ້າທີ່ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອນຳສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ເປັນແຜນການ, ແຜນງານ ແລະ ໂຄງການ ເພື່ອຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ບົດແນະນຳກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໃນຂອບເຂດທົ່ວປະເທດ;
4. ສ້າງ, ຍົກລະດັບ, ພັດທະນາຊັບພະຍາກອນມະນຸດ ໃນວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
5. ຄົ້ນຄວ້າ ອອກ, ຕໍ່, ໂຈະ, ປ່ຽນແປງ, ຖອນ ແລະ ຍົກເລີກໃບອະນຸຍາດທາງດ້ານວິຊາການດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
6. ອະນຸຍາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ເປັນຕົ້ນ ເລກໝາຍອິນເຕີເນັດ;
7. ກວດກາ, ຢັ້ງຢືນ ມາດຕະຖານເຕັກນິກ;

8. ຄຸ້ມຄອງ ແລະ ຕິດຕາມ ກວດກາ ການບໍລິການ ແລະ ການນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

9. ອະນຸຍາດທາງດ້ານວິຊາການ ແລະຕິດຕາມ ກວດກາ ການນຳເຂົ້າ ແລະ ຈຳໜ່າຍອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ;

10. ເກັບຄ່າທຳນຽມ ແລະ ຄ່າບໍລິການເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຂົ້າງົບປະມານແຫ່ງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ພິຈາລະນາ ແລະ ແກ້ໄຂຄຳສະເໜີທີ່ກ່ຽວຂ້ອງກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

12. ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໃນຂອບເຂດທົ່ວປະເທດ;

13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

14. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ສິດ ແລະ ໜ້າທີ່ຂອງ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ໃນຂອບເຂດທ້ອງຖິ່ນຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

2. ຈັດຕັ້ງປະຕິບັດ ແລະ ໂຄສະນາເຜີຍແຜ່ກົດໝາຍກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຂຶ້ນແຜນ, ສ້າງ ແລະ ຍົກລະດັບພັດທະນາຊັບພະຍາກອນມະນຸດ ໃນວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

4. ອະນຸຍາດ, ສືບຕໍ່, ໂຈະ, ຖອນ ແລະ ຍົກເລີກ ທຸລະກິດເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕາມການມອບໝາຍຂອງຂັ້ນເທິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

5. ຕິດຕາມການເຜີຍແຜ່ຂໍ້ມູນ ຂ່າວສານທາງເອເລັກໂຕຣນິກ ທີ່ພົວພັນ ຫຼື ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

6. ເກັບຄ່າທຳນຽມ ແລະ ຄ່າບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ພິຈາລະນາ ແລະ ແກ້ໄຂຄຳສະເໜີຕ່າງໆທີ່ກ່ຽວຂ້ອງກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ເກັບກຳສະຖິຕິກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

9. ຕິດຕາມ, ກວດກາ ການນຳເຂົ້າ ແລະ ຈຳໜ່າຍອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ;

10. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຂອງຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ;

11. ປະສານສົມທົບກັບພະແນກການອື່ນ ເພື່ອຈັດຕັ້ງຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນຕໍ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 ສິດ ແລະ ໜ້າທີ່ຂອງ ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ໃນຂອບເຂດທ້ອງຖິ່ນຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ, ເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

2. ຂຶ້ນແຜນ, ສ້າງ, ບຳລຸງ ແລະ ພັດທະນາຊັບພະຍາກອນມະນຸດໃນວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ນຳສົ່ງການສະເໜີຂໍອະນຸຍາດ, ສືບຕໍ່, ໂຈະ, ຖອນ ແລະ ຍົກເລີກ ທຸລະກິດເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໃຫ້ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ;

4. ນຳສົ່ງຄຳສະເໜີຂອງຜູ້ໃຊ້ບໍລິການກ່ຽວກັບຄຸນນະພາບ, ມາດຕະຖານເຕັກນິກ, ຄ່າບໍລິການ ແລະ ຄຳສະເໜີອື່ນ ໃຫ້ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ;

5. ຕິດຕາມ, ກວດກາ ການບໍລິການ ແລະ ການນຳໃຊ້ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ລາຍງານໃຫ້ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ;

6. ເກັບກຳສະຖິຕິກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

7. ປະສານສົມທົບກັບພາກສ່ວນອື່ນ ເພື່ອຈັດຕັ້ງຄຸ້ມຄອງວຽກງານ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນຕໍ່ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 59 ສິດ ແລະ ໜ້າທີ່ຂອງພາກສ່ວນອື່ນ

ໃນການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ, ຂະແໜງການ ແລະ ພາກສ່ວນອື່ນ ມີສິດ ແລະ ໜ້າທີ່ ໃນການໃຫ້ຄວາມຮ່ວມມື ແລະ ປະສານສົມທົບກັບຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຫຼື ປະຕິບັດວຽກງານດັ່ງກ່າວຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາ

### ມາດຕາ 60 ອົງການກວດກາວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ອົງການກວດກາວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງມີ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ.

### ມາດຕາ 61 ເນື້ອໃນການກວດກາ

ການກວດກາວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງການເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

4. ການເຄື່ອນໄຫວຂອງຜູ້ໃຫ້ບໍລິການເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

5. ການເຄື່ອນໄຫວຂອງຜູ້ໃຊ້ບໍລິການເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

6. ການປະຕິບັດສັນຍາສາກົນ ແລະ ສົນທິສັນຍາກ່ຽວກັບວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 62 ຮູບການກວດກາ**

ການກວດກາວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີ ສາມ ຮູບການ ຄື:

1. ການກວດກາ ປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 63 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍ ຕາມລະບຽບການ.

**ມາດຕາ 64 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 65 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ໃນສະຖານເບົາ ຈະຖືກ ຕັກເຕືອນ, ສຶກສາອົບຮົມ.

**ມາດຕາ 66 ມາດຕະການທາງວິໄນ**

ພະນັກງານ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 67 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານໂດຍບໍ່ໄດ້ຮັບອະນຸຍາດ;
2. ເອົາໃບອະນຸຍາດທີ່ຕົນໄດ້ຮັບໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼືໂອນໃຫ້ຜູ້ອື່ນ;
3. ນຳເຂົ້າອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ;
4. ຜະລິດ, ປະກອບ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ ຫຼື ໃຫ້ບໍລິການສ້ອມແປງອຸປະກອນ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຫຼື ອຸປະກອນເອເລັກໂຕຣນິກທີ່ກ່ຽວຂ້ອງ ໂດຍບໍ່ໄດ້ມາດຕະຖານ;
5. ເຂົ້າຫາ, ລວບລວມ, ນຳໃຊ້ຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
6. ສະໜອງ, ນຳໃຊ້ຂໍ້ມູນສ່ວນບຸກຄົນທີ່ຕົນໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;
7. ນຳໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອໂຄສະນາຊວນເຊື່ອ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

ອັດຕາການປັບໃໝໃນແຕ່ລະກໍລະນີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 68 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍແກ່ຜູ້ອື່ນຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 69 ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ, ກົດໝາຍອື່ນທີ່ກຳນົດໂທດທາງອາຍາ ແລ້ວແຕ່ລະກໍລະນີເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 70 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 71  ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**